VIENTIANE CENTER
ວຽງຈັນເຊັນເຕີ
ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY
ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, Tel & Fax: (+856) 21 228299

ບົດລາຍງານການເຄື່ອນໄຫວທຸລະກິດ
6 ເດືອນຕົ້ນປີ 2023
ຂອງ ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ

1. ຂໍ້ມູນກ່ຽວກັບບໍລິສັດ

1.1 ວິໄສທັດ

ວຈຊຕ ມຸ່ງໝັ້ນ ການສ້າງແບຣນສູນການຄ້າອັນດັບໜຶ່ງຢູ່ລາວ, ເປັນສູນກາງການຄ້າ, ສູນກາງສຳນັກງານ, ສູນກາງການເງິນ ແລະ ສູນກາງການວາງສະແດງ ຂອງປະເທດລາວ.

1.2 ພາລະກິດ

ນຳເອົາວິຖີຊີວິດແບບຕົວເມືອງທີ່ເຕັມໄປດ້ວຍຄວາມສຸກໃຫ້ແກ່ປະເທດລາວ.

1.3 ແນະນຳບໍລິສັດ

ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ ສ້າງຕັ້ງຂຶ້ນຢ່າງເປັນທາງການໃນວັນທີ 30 ພະຈິກ 2017 ໂດຍບໍລິສັດພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕອນເໜືອ ຈຳກັດ ທີ່ຮ່ວມກັນສ້າງຕັ້ງຂຶ້ນລະຫວ່າງກຸ່ມບໍລິສັດ ກໍ່ສ້າງ ລົງທຶນ ແລະ ຖືຮຸ້ນແຂວງຢຸນນານ ຈຳກັດ ແລະ ກຸ່ມບໍລິສັດ ກຣິດຕະພິງ ຈຳກັດ. ບໍລິສັດໄດ້ສຳເລັດການຈົດທະບຽນໃນຕະຫຼາດຫຼັກຊັບລາວຢ່າງເປັນທາງການໃນວັນທີ 31 ພຶດສະພາ 2019 (ຊື່ຫຼັກຊັບ “VCL”).

ກິດຈະການຫຼັກ ຂອງບໍລິສັດແມ່ນພັດທະນາອະສັງຫາລິມະຊັບສະເພາະດ້ານປະເພດອາຄານເພື່ອໃຫ້ເຊົ່າ-ຂາຍ, ທຸລະກິດຂອງ ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນປະກອບດ້ວຍ ການເກັບຄ່າເຊົ່າພື້ນທີ່ໃນສູນການຄ້າ ວຽງຈັນເຊັນເຕີ ແລະ ຫັກເອົາເປີເຊັນຕາມຍອດຂາຍເປັນຄ່າບໍລິຫານສູນການຄ້າ, ການຈັດງານວາງສະແດງເຊິ່ງເປັນກຳມະສິດພ້ອມທັງບໍລິຫານພື້ນທີ່ວາງສະແດງດ້ວຍການເກັບຄ່າເຊົ່າ, ການເກັບຄ່າເຊົ່າປ້າຍໂຄສະນາ, ການເກັບຄ່າເຊົ່າສຳນັກງານຫ້ອງການ .

ໂດຍຜ່ານການສ້າງເປັນແບຣນຂອງຕົນ ເພີ່ມປະສິດທິພາບໃນວຽກງານການບໍລິການ ປັບປຸງຮູບແບບການດຳເນີນທຸລະກິດ, ສູນການຄ້າ ແລະ ສຳນັກງານຫ້ອງການໄດ້ດຶງດູດທຸລະກິດທີ່ມີຊື່ສຽງເຊັ່ນ: ທະນາຄານແຫ່ງ ສປ ຈີນ, ຮ້ານກາເຟ ອາເມຊອນ, ຮ້ານມິນິໂຊ, ໂຮງໜັງ MAJOR ແລະ ວິສາຫະກິດຕ່າງປະເທດຂະໜາດໃຫຍ່ ເຊັ່ນ: ບໍລິສັດໄຟຟ້າເກົາຫຼີ, ບໍລິສັດ ປະກັນຊີວິດພຣຸເດັນໂຊ, ບໍລິສັດ DKSH ໄດ້ເຂົ້າມາເຊົ່າພື້ນທີ່ຮ້ານຄ້າ ແລະ ອາຄານສຳນັກງານ ຂອງບໍລິສັດ ວຽງຈັນເຊີນເຕີ ລາວ ມະຫາຊົນ. ມາເຖິງປະຈຸບັນ ວຽງຈັນເຊີນເຕີ ໄດ້ຄ່ອຍໆກາຍເປັນສູນກາງການຄ້າ, ສູນກາງສຳນັກງານ , ສູນກາງທາງດ້ານການເງິນ ແລະ ສູນກາງການຈັດງານວາງສະແດງສິນຄ້າໃນລາວ, ເປັນແບຣນສູນການຄ້າອັນດັບໜຶ່ງຢູ່ ລາວ ແລະ ຕົວແບບການຮ່ວມມື ຂອງລັດຖະບານສອງຊາດລາວ-ຈີນ.

1.4 ຂໍ້ມູນທົ່ວໄປຂອງບໍລິສັດ

1.4.1 ທີ່ຕັ້ງ

ສຳນັກງານຂອງ ວຈຊຕ ຕັ້ງຢູ່ ຖະໜົນຄູວຽງ, ບ້ານໜອງຈັນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ.

1.4.2 ຕິດຕໍ່ ແລະ ພົວພັນ

ເບີໂທ (+856-21) 228299

ແຟັກ (+856-21) 228299

ເວັບໄຊ: http://www.vcplao.com/

1.4.3 ທຶນຈົດທະບຽນ

ທຶນຈົດທະບຽນ ນະວັນທີ 15 ສິງຫາ 2023 ແມ່ນ 147.199.900.000 ກີບ.

1.4.4 ຂໍ້ມູນກ່ຽວກັບຜູ້ຖືຮຸ້ນ

ລາຍຊື່ຜູ້ຖືຮຸ້ນລາຍໃຫຍ່ ຂອງ ວຈຊຕ ທີ່ຖືຮຸ້ນແຕ່ 5 ສ່ວນຮ້ອຍຂຶ້ນໄປ ນະວັນທີ 15 ສິງຫາ 2023 ໄດ້ແກ່:

(1) ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕອນເໜືອ ຈຳກັດ ຈຳນວນຮຸ້ນທີ່ຖືຄອງແມ່ນ 95.999.200 ຮຸ້ນ ເທົ່າກັບ 65,22% ຂອງຈຳນວນຮຸ້ນທັງໝົດ.

(2) ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ ຈຳນວນຮຸ້ນທີ່ຖືຄອງແມ່ນ 47.433.000 ຮຸ້ນ ເທົ່າກັບ 32,22% ຂອງຈຳນວນຮຸ້ນທັງໝົດ.

2. ສະພາບໂດຍລວມຂອງຂະແໜງການ ແລະ ຂໍ້ມູນສຳຄັນທາງການເງິນ

2.1 ການວິເຄາະຄວາມສ່ຽງຂອງຂະແໜງການ

2.1.1 ການຕະຫຼາດ ແລະ ການດຳເນີນງານຂອງສູນການຄ້າ: ປັດໃຈທີໜຶ່ງ, ເງິນກີບຍັງສືບຕໍ່ອ່ອນຄ່າຢ່າງຕໍ່ເນື່ອງ, ອັດຕາເງິນເຟີ້ຍັງຄົງສູງ ສິ່ງຜົນໃຫ້ກຳລັງການຊື້ຂອງປະຊາຊົນຫຼຸດລົງ, ເຮັດໃຫ້ຍີ່ຫໍ້ສາກົນເຂົ້າສູ່ຕະຫຼາດລາວໄດ້ຍາກ, ການເຈລະຈາ ແລະ ຕົກລົງກັນໃນການລົງທຶນແມ່ນຍືດເວລາຍາວອອກໄປ. ປັດໃຈທີສອງ, ຍ້ອນອັດຕາເງິນກີບອ່ອນຄ່າ, ສິ່ງຜົນໂດຍກົງໃຫ້ລາຄາສິນຄ້າໃນສູນການຄ້າວຽງຈັນເຊັນເຕີ້ໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍ, ການອັບເດດສິນຄ້າໃໝ່ແມ່ນຊ້າລົງ ສິ່ງຜົນກະທົບແກ່ຍອດຂາຍໂດຍລວມຂອງສູນການຄ້າ. ປັດໃຈທີໜຶ່ງ ແມ່ນບັນດາຫ້ວໜ່ວຍທຸລະກິດ ໃນບໍລິເວນອ້ອມຂ້າງທີ່ພົ້ນເດັ່ນຂຶ້ນເຊັ່ນ: Parkson, Naga Mall ແລະ Vientiane Life Center ແມ່ນຄ່ອຍໆເຕີບໃຫຍ່ຂຶ້ນເລື້ອຍໆ, ເຖິງ ແມ່ນວ່າວຽງຈັນເຊັນເຕີ ກັບ ບັນດາໜ່ວຍທຸລະກິດອ້ອມຂ້າງແມ່ນກາຍເປັນສູນກາງຂອງເຂດສູນການຄ້າໃນຕົວເມືອງ, ແຕ່

ວ່າກໍເຮັດໃຫ້ເກີດມີການແຂ່ງຂັນເຊິ່ງກັນແລະກັນສູງຂຶ້ນ.

2.1.2 ການຕະຫຼາດ ແລະ ການດຳເນີນງານຂອງອາຄານສຳນັກງານ: ປັດໃຈທີໜຶ່ງ, ຜູ້ເຊົ່າໄດ້ຮັບຜົນກະທົບຈາກສະພາບແວດລ້ອມຂອງຕະຫຼາດ, ເຮັດໃຫ້ບັນດາລູກຄ້າຫຼຸດງົບປະມານລົງ, ລູກຄ້າບາງພາກສ່ວນຍົກເລີກສັນຍາເຊົ່າ ຫຼື ຂໍນະໂຍບາຍຫຼຸດຄ່າເຊົ່າລົງ. ປັດໃຈທີສອງ, ອາຄານອ້ອມຂ້າງວຽງຈັນເຊັນເຕີ ເຊັ່ນ: Naga Mall ແລະ Vientiane Life Center ກໍ່ໄດ້ສະເໜີຮ້ານຄ້າໃຫ້ລູກຄ້າເພື່ອເຊົ່າເປັນຫ້ອງການ, ເຮັດໃຫ້ມີການກະຈາຍລູກຄ້າ ແລະ ການແຂ່ງຂັນສູງຂຶ້ນ.

2.2 ການພັດທະນາທຸລະກິດທີ່ສຳຄັນຂອງບໍລິສັດ

ຕໍ່ກັບສະຖານະພາບຂອງຂະແໜງການຂ້າງເທິງ, ວຽງຈັນເຊັນເຕີ ໄດ້ອີງໃສ່ຈຸດເດັ່ນກໍຄືການປະສົມປະສານລະຫວ່າງສູນການຄ້າ ແລະ ອາຄານສຳນັກງານຢູ່ໃນສະຖານທີ່ດຽວກັນ, ຜ່ານຊອງທາງການຈັດງານກິດຈະກຳຕ່າງໆໃນຫ້ອງໂຖງໃຫຍ່ຂອງສູນການຄ້າ ເພື່ອດຶງດູດລູກຄ້າເຂົ້າມາໃຊ້ບໍລິການຢ່າງຕໍ່ເນື່ອງ, ຄຽງຄູ່ກັບການປັບປຸງຄຸນນະພາບການບໍລິການດ້ານຊັບສິນຂອງອາຄານສຳນັກງານຢ່າງບໍ່ຢຸດຢັ້ງ, ແລະສ້າງຄວາມສະດວກສະບາຍໃຫ້ແກ່ລູກຄ້າໃນການຈັບຈ່າຍໃຊ້ສອຍ ແລະ ການເຮັດວຽກ. ກ່ຽວກັບວຽກງານການຕະຫຼາດດ້ານການຈັດງານກິດຈະກຳໃນຫົກເດືອນຕົ້ນປີ 2023, ວຽງຈັນເຊັນເຕີໄດ້ຈັດຂຶ້ນທັງໝົດ 37 ກິດຈະກຳຂະໜາດໃຫຍ່ ແລະ ຂະໜາດກາງເຊັ່ນ: ງານສັບປະດາຊັບສິນທາງປັນຍາປະຈຳປີ 2023 Intellectual Property Week, ງານຕະຫຼາດແຮງງານຂະໜາດໃຫຍ່ Ready 4 Work Festival , ງານສັບປະດາເກົາຫຼີ, ເທດສະການຮູບເງົາຍີ່ປຸ່ນ, ການສະແດງລົດຍົນ (Geely, Nissan, Kia, Hyundai, Dongfeng, Great Wall, BYD), ງານອັນເດັກນ້ອຍສາກົນ ແລະອື່ນໆ. ກ່ຽວກັບວຽກງານການຕະຫຼາດດ້ານການໂຄສະນານັ້ນ ວຽງຈັນເຊັນເຕີໄດ້ສ້າງສາຍພົວພັນຮ່ວມມືໃນໄລຍະຍາວກັບ Food Panda ແລະ ໄດ້ເຊັນສັນຍາເຊົ່າປ້າຍໂຄສະນາຂະໜາດໃຫຍ່ຢູ່ດ້ານໜ້າສູນການຄ້າ, ໂຮງໜັງກໍໄດ້ເປີດໂຕຮູບເງົາໃໝ່ໃຫ້ທັນກະແສ ແລະ ຈັດກິດຈະກຳຫຼຸດລາຄາພິເສດ ເປັນຕົ້ນ, ໄດ້ເພີ່ມຄວາມໝັ້ນໃຈແກ່ຜູ້ບໍລິໂພກໃນຕະຫຼາດ ແລະ ຜູ້ເຂົ້າຊົມຄ່ອຍໆເພີ່ມຂຶ້ນເທື່ອລະກ້າວ.

2.3 ຂໍ້ມູນທາງດ້ານການເງິນທີ່ສຳຄັນໃນໄລຍະຫົກເດືອນຕົ້ນປີ 2023

2.3.1 ລາຍຮັບ

ໃນໄລຍະຫົກເດືອນຕົ້ນປີ 2023, ບໍລິສັດບັນລຸລາຍຮັບທັງໝົດ 8.303.155.898,00 ກີບ, ທຽບໃສ່ໄລຍະດຽວກັນຂອງປີ 2022 ແມ່ນເພີ່ມຂຶ້ນ 76,06%. ໃນນັ້ນ, ລາຍຮັບຄ່າເຊົ່າຮ້ານ 2.158.166.584,92 ກີບ, ລາຍຮັບຄ່າເຊົ່າຫ້ອງການ 2.947.964.444,43 ກີບ, ລາຍຮັບການຮ່ວມທຸລະກິດ 1.405.212.385,00 ກີບ, ລາຍຮັບຄ່າເຊົ່າ

ສະຖານທີ່ຈັດງານ 345.969.492,21 ກີບ, ລາຍຮັບຄ່າເຊົ່າປ້າຍໂຄສະນາ 545.514.726,24 ແລະ ລາຍຮັບອື່ນໆອີກ 900.328.265,20 ກີບ.

ເຫດຜົນສຳລັບການຂະຫຍາຍຕົວຂອງລາຍຮັບຂອງບໍລິສັດໃນໄລຍະຫົກເດືອນຕົ້ນປີ 2023:

ປັດໃຈທີໜຶ່ງ ອາຄານສຳນັກງານຂອງວຽງຈັນເຊັນເຕີ ແມ່ນເປັນສູນການຄ້າສຳນັກງານລະດັບສູງໃນນະຄອນຫຼວງວຽງຈັນ, ນັບຕັ້ງແຕ່ໄລຍະລະບາດຂອງພະຍາດໂຄວິດ 19 ໄດ້ສິ້ນສຸດລົງ ນັກລົງທຶນໄດ້ສືບຕໍ່ເຂົ້າມາລົງທຶນໃນລາວ ເຮັດໃຫ້ມີຜູ້ເຊົ່າໃໝ່ເພີ່ມຂຶ້ນ.

ປັດໃຈທີສອງ, ອັດຕາແລກປ່ຽນມີການເໜັງຕີງຢ່າງຫຼວງຫຼາຍ, ອັດຕາເງິນເຟີ້ຍັງຄົງສູງ ແລະ ລາຄາເຊົ່າທີ່ເປັນສະກຸນເງິນກີບເພີ່ມຂຶ້ນຢ່າງຫຼວງຫຼາຍ.

2.3.2 ກຳໄລ ແລະ ຂາດທຶນ

ໃນໄລຍະເດືອນຕົ້ນປີ 2023, ຄ່າໃຊ້ຈ່າຍໃນການດຳເນີນງານຂອງບໍລິສັດແມ່ນ 2.228.701.568,00 ກີບ, ທຽບໃສ່ໄລຍະດຽວກັນປີ 2022 ເພີ່ມຂຶ້ນ 32,25%, ເຫດຜົນຕົ້ນຕໍແມ່ນຍ້ອນໃນໄລຍະຫົກເດືອນຕົ້ນປີ 2023 ທຽບກັບໄລຍະຫົກເດືອນຕົ້ນປີ 2022 ອັດຕາແລກປ່ຽນລະຫວ່າງສະກຸນເງິນກີບ ແລະ ສະກຸນເງິນໂດລາ ເພີ່ມຂຶ້ນ 27%, ຄ່າບໍລິຫານສ່ວນກາງ ແລະ ຄ່າບໍລິການກວດສອບບັນຊີ ແມ່ນກຳນົດເປັນສະກຸນເງິນໂດລາ.

ຂາດທຶນຈາກອັດຕາແລກປ່ຽນ 599.421.408,00 ກີບ, ເຫດຜົນຕົ້ນຕໍແມ່ນຍ້ອນ ສະກຸນເງິນກີບອ່ອນຄ່າລົງຫຼາຍ ເຮັດໃຫ້ມີການຂາດທຶນໃນເວລາສົມທຽບເງິນຕາຈາກເງິນຄ້ຳປະກັນທີ່ເກັບເປັນສະກຸນເງິນໂດລາ.

ກຳໄລກ່ອນເສຍອາກອນ 5.481.032.923,00 ກີບ, ລາຍຈ່າຍອາກອນລາຍໄດ້ 933.297.712,00 ກີບ, ກຳໄລສຸດທິ 4.547.735.211,00 ກີບ, ທຽບໃສ່ປີຜ່ານມາເພີ່ມຂຶ້ນ 59,5%ເຫດຜົນການເພີ່ມຂຶ້ນຂອງກຳໄລສຸດທິ: ເນື່ອງຈາກລາຍຮັບຂອງບໍລິສັດເພີ່ມຂຶ້ນ.

2.3.3 ຊັບສິນທັງໝົດ

ໃນໄລຍະຫົກເດືອນຕົ້ນປີ 2023, ຊັບສິນທັງໝົດຂອງບໍລິສັດແມ່ນ 302.437.539.293,00 ກີບ, ເພີ່ມຂຶ້ນ 2,07% ເມື່ອທຽບໃສ່ ປີ 2022.

ສາເຫດທີ່ເພີ່ມຂຶ້ນ ເນື່ອງຈາກກຳໄລຂອງບໍລິສັດໃນໄລຍະປີການລາຍງານບັນຊີ ເຮັດໃຫ້ມູນຄ່າຊັບສິນເພີ່ມຂຶ້ນ.

2.3.4 ໜີ້ສິນທັງໝົດ

ໃນໄລຍະຫົກເດືອນຕົ້ນປີ 2023, ໜີ້ສິນທັງໝົດຂອງບໍລິສັດ ແມ່ນ 40.368.593.570,00 ກີບ, ເພີ່ມຂຶ້ນ 6,13% ເມື່ອທຽບໃສ່ໄລຍະດຽວກັນຂອງປີ 2022.

ສາເຫດທີ່ໜີ້ສິນເພີ່ມຂຶ້ນ: ໜຶ່ງແມ່ນຍ້ອນອາກອນເຍື້ອນຊຳລະເພີ່ມຂຶ້ນ, ສອງແມ່ນສະພາບການເກັບເງິນຄ່າຕ່າງໆໄດ້ຂ້ອນຂ້າງດີ ແລະ ຈຳນວນເງິນທີ່ເກັບລ່ວງໜ້າເພີ່ມຂຶ້ນ, ສາມແມ່ນສະກຸນເງິນກີບອ່ອນຄ່າລົງ, ລູກຄ້າຈ່າຍຄ່າມັດຈຳເປັນສະກຸນເງິນໂດລ່າ ເຮັດໃຫ້ໜີ້ເພີ່ມຂຶ້ນ.

3.ໂຄງຮ່າງການຈັດຕັ້ງຂອງສະພາບໍລິຫານ ແລະ ຄະນະກຳມະການ

3.1 ສະພາບໍລິຫານ

3.1.1 ສະມາຊິກສະພາບໍລິຫານ

ສະພາບໍລິຫານ ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ ປະກອບດ້ວຍ 11 ທ່ານ:

- ທ່ານ ເຫີ ຈຸນ (Mr. He Jun) ເປັນປະທານ
- ທ່ານ ນາງ ອໍລະໄທ ສັນຕິຄົງຄາ ເປັນຮອງປະທານ
- ທ່ານ ບຸລະພາ ສັນຕິຄົງຄາ ເປັນສະມາຊິກ
- ທ່ານ ຫວັງ ເຫວີຍຄຸນ (Mr. Wang Weikun) ເປັນສະມາຊິກ
- ທ່ານ ອູ່ ຊິງຫວາ (Mr. Wu Xinghua) ເປັນສະມາຊິກ
- ທ່ານ ຫຼໍ ສ້ຽວດົງ (Mr. Luo Xiaodong) ເປັນສະມາຊິກ
- ທ່ານ ເຫຼີ ຢ້າວໄຫ (Mr. Lei Yaohai) ເປັນສະມາຊິກ
- ທ່ານ ສ່ຽວ ໂຢງ (Mr. Xiao Yong) ເປັນສະມາຊິກອິດສະຫຼະ
- ທ່ານ ຈ່າງ ທຽນຢີ (Ms. Zhang Tianyi) ເປັນສະມາຊິກອິດສະຫຼະ
- ທ່ານ ວຽງສະຫວັນ ພັນທະລີ ເປັນສະມາຊິກອິດສະຫຼະ
- ທ່ານ ຈໍຊິ່ງ ບົວສີເມັ່ງມາ ເປັນສະມາຊິກອິດສະຫຼະ

3.1.2 ປະຫວັດໂດຍຫຍໍ້ ຂອງສະມາຊິກສະພາບໍລິຫານ

（1）ທ່ານ ເຫີ ຈຸນ (Mr. He Jun)



- ສັນຊາດ: ຈີນ
- ວັນເດືອນປີເກີດ: 11/04/1989
- ພາສາ: ຈີນ
- ຕຳແໜ່ງ: ປະທານ
- ປະຫວັດການສຶກສາ: ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລຢູນນານ,ສາຂາບໍລິຫານທຸລະກິດ.

（2）ທ່ານ ນາງ ອໍລະໄທ ສັນຕິຄົງຄາ



- ສັນຊາດ: ລາວ
- ວັນເດືອນປີເກີດ: 21/01/1979
- ພາສາ: ລາວ,ໄທ
- ຕຳແໜ່ງ: ຮອງປະທານ
- ປະຫວັດການສຶກສາ:ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລແຫ່ງຊາດລາວ, ສາຂາບໍລິຫານທຸລະກິດ.

（3） ທ່ານ ບຸລະພາ ສັນຕິຄີງຄາ



- ສັນຊາດ: ລາວ
- ວັນເດືອນປີເກີດ: 06/02/1967
- ພາສາ: ຈີນ, ລາວ
- ຕຳແໜ່ງ: ເປັນສະມາຊິກ
- ປະຫວັດການສຶກສາ: ຈົບການສຶກສາລະດັບປະລິນຍາຕີຢູ່ມະຫາວິທະຍາໄລຫວາໝານຫຼີກົງ ຈີນ, ສາຂາບໍລິຫານທຸລະກິດ.

（4）ທ່ານ ຫວັ໋ງ ເຫວີຍຄຸນ (Mr. Wang Weikun)



- ສັນຊາດ: ຈີນ
- ວັນເດືອນປີເກີດ: 15/05/1984
- ພາສາ: ຈີນ,ອັງກິດ
- ຕຳແໜ່ງ: ເປັນສະມາຊິກ, ປະທານເຈົ້າໜ້າທີ່ດ້ານການບໍລິຫານ
- ປະຫວັດການສຶກສາ: ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລເສດຖະກິດການຄ້າຕ່າງປະເທດ ຈີນ, ສາຂາການເງິນ,ລະດັບປະລິນຍາໂທຢູ່ມະຫາວິທະຍາໄລວາຊິດາ ຍີ່ປຸ່ນ, ສາຂາການພົວພັນສາກົນ.

（5）ທ່ານ ອຸ່ ຊິງຫວາ (Mr. Wu Xinghua)



- ສັນຊາດ: ຈີນ
- ວັນເດືອນປີເກີດ: 09/01/1984
- ພາສາ: ຈີນ, ອັງກິດ, ລາວ, ໄທ
- ຕຳແໜ່ງ: ເປັນສະມາຊິກ, ປະທານເຈົ້າໜ້າທີ່ດ້ານປະຕິບັດການ
- ປະຫວັດການສຶກສາ:ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລອັດສັມຊັ່ນ(Assumption Thai), ສາຂາບໍລິຫານທຸລະກິດ.

（6）ທ່ານ ຫຼໍ ສ້ຽວດົ້ງ (Mr. Luo Xiaodong)



- ສັນຊາດ: ຈີນ
- ວັນເດືອນປີເກີດ: 07/03/1989
- ພາສາ: ຈີນ
- ຕຳແໜ່ງ: ເປັນສະມາຊິກ,ປະທານເຈົ້າໜ້າທີ່ດ້ານການເງິນ
- ປະຫວັດການສຶກສາ:ຈົບການສຶກສາລະດັບປະລິນຍາຕີຢູ່ມະຫາວິທະຍາໄລການເງິນ ແຂວງຢູນນານ ຈີນ, ສາຂາການເງິນ-ບັນຊີ.

（7）ທ່ານ ເຫຼີຍຢ້າວຫ້າຍ(Mr. Lei Yaohai)



- ສັນຊາດ: ຈີນ
- ວັນເດືອນປີເກີດ: 28 /11/1984
- ພາສາ: ຈີນ
- ຕຳແໜ່ງ: ເປັນສະມາຊິກ, ເລຂານຸການສະພາບໍລິຫານ
- ປະຫວັດການສຶກສາ: ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລຂອນແກ່ນ ປະເທດໄທ, ສາຂາບໍລິຫານທຸລະກິດ.

（8）ທ່ານ ສ່ຽວ ໂຢງ (Mr. Xiao Yong)



- ສັນຊາດ: ຈີນ
- ວັນເດືອນປີເກີດ: 02/07/1977
- ພາສາ: ຈີນ
- ຕຳແໜ່ງ: ເປັນສະມາຊິກອິດສະຫຼະ
- ປະຫວັດການສຶກສາ:ຈົບການສຶກສາລະດັບປະລິນຍາໂທຢູ່ວິທະຍາໄລການເງິນ ແຂວງຊານຕົ໋ງ ສປຈີນ, ສາຂາການເງິນ.

（9）ທ່ານ ຈ່າງ ທຽນຢີ້ (Ms. Zhang Tianyi)



- ສັນຊາດ: ຈີນ
- ວັນເດືອນປີເກີດ: 25/10/1976
- ພາສາ: ຈີນ
- ຕຳແໜ່ງ: ເປັນສະມາຊິກອິດສະຫຼະ
- ປະຫວັດການສຶກສາ:ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລ ແຂວງຢຸນນານ ສປຈີນ, ສາຂາກົດໝາຍ.

（10）ທ່ານ ວຽງສະຫວັນ ພັນທະລີ



- ສັນຊາດ: ລາວ
- ວັນເດືອນປີເກີດ: 25/01/1976
- ພາສາ:ລາວ, ອັງກິດ, ໄທ
- ຕຳແໜ່ງ: ເປັນສະມາຊິກອິດສະຫຼະ
- ປະຫວັດການສຶກສາ:ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລວໍຊິງຕັນ ອາເມລິກາ ສາຂາກົດໝາຍວ່າ

ດ້ວຍບໍລິສັດ ແລະ ກົດໝາຍຫຼັກຊັບ.

（11）ທ່ານ ຈໍຊິ່ງ ບົວສີເນັ່ງມາ



- ສັນຊາດ: ລາວ
- ວັນເດືອນປີເກີດ: 15/12/1972
- ພາສາ: ລາວ, ອັງກິດ, ໄທ, ຈີນ
- ຕຳແໜ່ງ: ເປັນສະມາຊິກອິດສະຫຼະ
- ປະຫວັດການສຶກສາ: ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລປະຊາຊົນຈີນ, ສາຂາບໍລິຫານທຸລະກິດ.

3.2 ການເຄື່ອນໄຫວຂອງສະພາບໍລິຫານ ແລະ ຄະນະກຳມະການທີ່ຂຶ້ນກັບສະພາບໍລິຫານ

3.2.1 ໄລຍະຫົກເດືອນຕົ້ນປີ 2022, ສະພາບໍລິຫານໄດ້ຈັດກອງປະຊຸມທັງໝົດ 4 ຄັ້ງ, ໃນນັ້ນ, ກອງປະຊຸມໄດ້ພິຈາລະນາ 13 ວາລະ ເຊັ່ນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ 2022 ແລະ ບົດລາຍງານການເງິນໂດຍຜ່ານການກວດສອບຈາກພາຍນອກ ແລະວາລະອື່ນໆ.

3.2.2 ອີງຕາມລະບຽບການທີ່ກ່ຽວຂ້ອງຂອງຄະນະກຳມະການຄຸ້ມຄອງຫຼັກຊັບລາວ, ຄະນະກຳມະການຄັດເລືອກໄດ້ດຳເນີນການຄັດເລືອກລາຍຊື່ຂອງສະມາຊິກສະພາບໍລິຫານ ສະໄໝທີ່ສາມ ແລະມີການລາຍງານຕໍ່ສະພາບໍລິຫານ ເພື່ອສະໜອງຂໍ້ມູນພື້ນຖານໃຫ້ບັນດາສະມາຊິກສະພາບໍລິຫານໃນການຕັດສິນໃຈ.

3.2.3 ຄະນະກຳມະການກວດສອບໄດ້ຈັດກອງປະຊຸມ 2 ຄັ້ງ ໂດຍອີງຕາມແຜນການເຄື່ອນໄຫວວຽກງານປະຈຳປີ, ເພື່ອທົບທວນບົດລາຍງານການເງິນປະຈຳປີ 2022 ຂອງບໍລິສັດໂດຍຜ່ານການກວດສອບຈາກພາຍນອກ ແລະ ບົດລາຍງານການເງິນໄຕມາດທີ 1 ປີ 2023 ເພື່ອຮັບປະກັນຄວາມຖືກຕ້ອງຂອງບົດລາຍງານການເງິນຂອງບໍລິສັດ.

4. ຄວາມຮັບຜິດຊອບໃນສັງຄົມ

ແຕ່ວັນທີ 30 ພຶດສະພາ ຫາ 4 ມິຖຸນາ 2023, ສູນການຄ້າວຽງຈັນເຊັນເຕີຮ່ວມກັບອົງການຊ່ວຍເຫລືອເດັກສາກົນ “Save the Children” ໄດ້ຈັດກິດຈະກຳວັນເດັກນ້ອຍ ພາຍໃຕ້ຫົວຂໍ້ “ປົກປ້ອງສິດທິເດັກ ແລະ ຕໍ່ສູ້ເພື່ອສະຫວັດດີ

ພາບຂອງເດັກ” ພາຍໃນງານ ໄດ້ມີການຈັດວາງ ຫ້ອງອ່ານອີເລັກໂຕຣນິກ, ມຸມອ່ານໜັງສື, ມຸມສ້າງສັນຜົນງານ ແລະ ມຸມ ແຕ້ມຮູບ ເພື່ອໃຫ້ເດັກນ້ອຍໄດ້ພັດທະນາຈິນຕະນາການ ແລະ ປົດປ່ອຍຄວາມເປັນທຳມະຊາດ ທີ່ຢາກຮູ້ຢາກເຫັນຂອງ ເຂົາເຈົ້າ, ຮຽນຮູ້ຢ່າງມີຄວາມສຸກ ແລະ ໄດ້ຮັບຄວາມສຸກໃນການຮຽນຮູ້.



5.ວຽກງານຮັກສາຄວາມສຳພັນກັບນັກລົງທຶນ

ວຽງຈັນເຊັນເຕີ ໄດ້ເຂົ້າຮ່ວມກອງປະຊຸມພົບປະນັກລົງທຶນ ທີ່ຕະຫຼາດຫຼັກຊັບລາວ ຈັດຂຶ້ນລະຫວ່າງວັນທີ 16 ຫາ 17 ພຶດສະພາ 2023 ໂດຍສຸມໃສ່ການນຳສະເໜີພາບລວມຂອງບໍລິສັດ, ທຸລະກິດຕົ້ນຕໍ, ໂຄງປະກອບການຈັດຕັ້ງ, ຍຸດທະ ສາດການພັດທະນາ ແລະ ແຜນທຸລະກິດປີ 2023, ຄວາມຮັບຜິດຊອບຕໍ່ສັງຄົມຂອງບໍລິສັດ ແລະ ວຽກງານດ້ານການເງິນ ທີ່ສຳຄັນຂອງບໍລິສັດໃນ ປີ 2022 ເປັນຕົ້ນ.

6. ລາຍການທີ່ກ່ຽວພັນ

ໃນໄລຍະຫົກເດືອນຕົ້ນປີ 2023, ອີງຕາມມະຕິກອງປະຊຸມຜູ້ຖືຮຸ້ນປະຈຳປີ 2022, ທີມງານບໍລິຫານ ໄດ້ດຳເນີນ ການຮັບຊື້ຊັບສິນໃນອາຄານສຳນັກງານຂອງບໍລິສັດ ພັດທະນາ ສູນເສດຖະກິດການຄ້າຄົບວົງຈອນຕອນເໜືອ ຈຳກັດ, ເນື້ອທີ່ການຊື້ຂາຍທັງໝົດ 236.81 ຕາແມັດ ແລະ ລວມເປັນເງິນທັງໝົດ 564.777,00 ໂດລາສະຫະລັດ.

7. ວຽກງານທີ່ສຳຄັນ ໃນໄລຍະຫົກເດືອນທ້າຍປີ 2023.

7.1 ວາງແຜນປັບປຸງຮູບແບບທຸລະກິດຂອງສູນການຄ້າ, ກຳນົດພື້ນທີ່ໃຫ້ຊັດເຈນ, ສຸມໃສ່ດຶງດູດຍີ່ຫໍ້ທີ່ມີຊື່ສຽງເຂົ້າມາ

ໃນສູນການຄ້າ ເພື່ອໃຫ້ກາຍເປັນສູນລວມຂອງຍີ່ຫໍ້ດັງ. ອີງຕາມນະໂຍບາຍ "ໜຶ່ງທຸລະກິດໜຶ່ງນະໂຍບາຍ, ເຂດພິເສດລາຄາພິເສດ" , ສ້າງຄວາມຫຼາກຫຼາຍຂອງຍີ່ຫໍ້, ສຸກຍູ້ບັນດາຜູ້ປະກອບການໃນການໂຄສະນາສິນຄ້າ, ເພື່ອເຂັ້ບເຄື່ອນຍີ່ຫໍ້ອື່ນໆ ແລະ ຍົກສູງລະດັບສິນຄ້າໃນສູນການຄ້າ.

7.2 ປັບປຸງ ແລະ ເສີມຂະຫຍາຍການບໍລິຫານຮ້ານທີ່ເປັນທະລະກິດຂະໜາດໃຫຍ່. ເຊື່ອມໂຍງກັນລະຫວ່າງໂຮງໜັງ, ໂບລິ່ງ, ສວນສະໜຸກ ແລະ ອື່ນໆເປັນຕົ້ນ ເພື່ອເສີມສ້າງກິດຈະກຳຮ່ວມກັນທີ່ມີຄວາມຫຼາກຫຼາຍ ໃຫ້ກາຍເປັນສູນລວມດ້ານການພັກຜ່ອນ ແລະ ຄວາມບັນເທີງແບບຄົບວົງຈອນ.

7.3 ສ້າງກິດຈະກຳພາຍໃຕ້ຫົວຂໍ້ພິເສດ. ໂດຍການລົງເລີກການຮ່ວມມືກັບບັນດາບໍລິສັດສາກົນ, ອີງການຈັດຕັ້ງສາກົນ, ອີງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ ແລະ ພາກລັດເປັນຕົ້ນ, ຈັດຕັ້ງສ້າງງານບຸນມາເຝນາໆຊາດແບບດັ້ງເດີມ, ການແຂ່ງຂັນເຕັ້ນຮີບຮ້ອບ, ງານວາງສະແດງລົດ ແລະ ກິດຈະກຳພິເສດອື່ນໆ, ເພື່ອເສີມຂະຫຍາຍພາບລັກຂອງວຽງຈັນເຊັ້ນເຕີ ໃນລາວໃຫ້ສູງຂຶ້ນອີກກ້າວໜຶ່ງ.

7.4 ຮ່ວມມືຮ່ວມໃຈພັດທະນາໄປພ້ອມກັນ ໂດຍປະຕິດບັດຕາມທິດທາງ"ໃຫ້ສູນການຄ້າສ້າງຄວາມສະດວກສະບາຍແກ່ສຳນັກງານ ແລະ ລູກຄ້າສານັກງານຕອບແທນຄືນໂດຍການຊົມໃຊ້ບໍລິການໃນສູນການຄ້າ", ເພີ່ມທະວີການແລກປ່ຽນຂໍ້ມູນດ້ານການຕະຫຼາດລະຫວ່າງສູນການຄ້າ ແລະ ສຳນັກງານ, ສ້າງຄວາມສາພັນກັບລູກຄ້າສານັກງານ ໂດຍການເປີດບໍລິການຊື້ບັດສູນອາຫານແບບເປັນກຸ່ມ ສະເພາະລູກຄ້າສຳນັກງານ ເພື່ອຊຸກຍູ້ປະສານສົມທົບ ແລະ ພັດທະນາຢ່າງເລິກເຊິ່ງຂອງສູນການຄ້າ ແລະ ອາຄານສຳນັກງານ.

7.5 ເພີ່ມທະວີໃນການຊອກຫາລູກຄ້າສຳນັກງານໃນລາວ, ພະຍາຍາມໄປເກັບກຳຂໍ້ມູນກ່ຽວກັບວິສາຫະກິດທີ່ເຂົ້າມາລົງທຶນໃໝ່ໃນລາວໂດຍຜ່ານຫຼາຍຊ່ອງທາງ, ສົ່ງເສີມການຕະຫຼາດ ແລະ ການໂຄສະນາຂອງສຳນັກງານຫ້ອງການ ເພື່ອເພີ່ມອັດຕາການໃຫ້ເຊົ່າພື້ນທີ່ຢ່າງຕໍ່ເນື່ອງ. ພ້ອມກັນນີ້, ໃຫ້ສຸມໃສ່ຮັດແໜ້ນຄຸນນະພາບການບໍລິການພາຍໃນ, ສັງລວມ ແລະ ປັບປຸງມາດຕະຖານການບໍລິການ ໃຫ້ດີຂຶ້ນເທື່ອລະກ້າວ, ໂດຍເລີ່ມຈາກມາດຕະການ ແລະ ນະວັດຕະກຳນ້ອຍໆ, ຍົກສູງມາດຕະຖານຂອງວຽກງານດ້ານບໍລິຫານເພື່ອສ້າງຄຸນຄ່າເພີ້ມໃຫ້ສູງຂຶ້ນ.

ປະທານສະພາບໍລິຫານ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ Vientiane Center Lao Public Company

He Jun